**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 03/ສປສສ

ນະຄອນຫຼວງວຽງຈັນ, ວັນທີ 29 / 6 /2016

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການພິຈາລະນາຫຼັກຊັບຄ້ຳປະກັນໃນການກູ້ຢືມເງິນ

**ອີງຕາມ** ມາດຕາ 21 ແລະ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມາດຕາ 10, 16 ແລະ 56 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ;

**ອີງຕາມ** ມາດຕາ 5 ແລະ 6 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ.

ໃນໄລຍະຜ່ານມາ ການດຳເນີນຄະດີແພ່ງ ທີ່ມີຂໍ້ຂັດແຍ່ງກ່ຽວກັບສັນຍາກູ້ຢືມ ຕາມມາດຕາ 56 ຂອງກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ເຫັນວ່າສາມາດຈັດຕັ້ງ ປະຕິບັດໄດ້ດີ ແຕ່ຍັງມີບາງບັນຫາມີຄວາມເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ບໍ່ທັນມີຄວາມເປັນເອກະພາບ ໂດຍສະເພາະການກູ້ຢືມເງິນ ທີ່ມີການຄ້ຳປະກັນ. ສະນັ້ນ ເພື່ອເຮັດໃຫ້ການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ມີຄວາມເປັນເອກະພາບ, ສອດຄ່ອງກັບສະພາບ ຄວາມເປັນຈິງ ແລະ ກົດໝາຍ.

**ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ ດັ່ງນີ້:**

1. ການກູ້ຢືມເງິນທີ່ມີການຄ້ຳປະກັນ ຕ້ອງເຮັດສັນຍາຄ້ຳປະກັນເປັນລາຍລັກອັກສອນ ຫຼື ເຊັນຄ້ຳປະກັນຢູ່ໃນສັນຍາກູ້ຢືມ ຕາມລະບຽບການ ຈຶ່ງເປັນການຄ້ຳປະກັນທີ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ;

2. ການກູ້ຢືມເງິນ ທີ່ຜູ້ໃຫ້ຢືມ ແລະ ຜູ້ກູ້ຢືມ ຕົກລົງເຮັດໃບມອບກຳມະສິດ, ສັນຍາຊື້-ຂາຍ, ສັນຍາຂາຍຝາກ ແລະ ຮູບການອື່ນ ມອບຊັບໃຫ້ແກ່ຜູ້ໃຫ້ຢືມ ເພື່ອໃຊ້ແທນເງິນກູ້ຢືມ ໃນເວລາຜູ້ກູ້ຢືມບໍ່ສາມາດໃຊ້ແທນເງິນກູ້ຢືມນັ້ນ ຫາກຢູ່ໃນກຳນົດເວລາຂອງສັນຍາກູ້ຢືມ ໃຫ້ຖືວ່າການມອບຊັບດັ່ງກ່າວ ເປັນການມອບຊັບ ເພື່ອຄ້ຳປະກັນການ ກູ້ຢືມເງິນ;
3. ການກູ້ຢືມເງິນ ທີ່ຜູ້ໃຫ້ຢືມ ແລະ ຜູ້ກູ້ຢືມ ຕົກລົງເຮັດໃບມອບກຳມະສິດ, ສັນຍາຊື້-ຂາຍ, ສັນຍາຂາຍຝາກ ແລະ ຮູບການອື່ນ ມອບຊັບໃຫ້ແກ່ຜູ້ໃຫ້ຢືມ ເພື່ອໃຊ້ແທນເງິນກູ້ຢືມ ໃນເວລາທີ່ຜູ້ກູ້ຢືມບໍ່ສາມາດໃຊ້ແທນເງິນກູ້ຢືມນັ້ນ ຫາກເຮັດຂຶ້ນພາຍຫຼັງສິ້ນສຸດກຳນົດເວລາສັນຍາກູ້ຢືມ ແລະ ມີການໄລ່ລຽງກັນແລ້ວ ຖືວ່າການມອບຊັບດັ່ງກ່າວ ເປັນການມອບຊັບເພື່ອໃຊ້ແທນການກູ້ຢືມເງິນ;
4. ໃນກໍລະນີຜູ້ໃຫ້ຢືມ ແລະ ຜູ້ກູ້ຢືມ ຂັດແຍ່ງເລື່ອງຕົ້ນທຶນ ຄືຜູ້ໃຫ້ກູ້ຢືມໄດ້ຫັກດອກເບັ້ຍກ່ອນລ່ວງໜ້າ, ຖ້າມີຂໍ້ຂັດແຍ່ງກັນເກີດຂຶ້ນ ແລະ ຜູ້ກູ້ຢືມມີຫລັກຖານຢັ້ງຢືນວ່າ ຜູ້ໃຫ້ຢືມໄດ້ຫັກເອົາດອກເບັ້ຍລ່ວງໜ້າແລ້ວ ກໍໃຫ້ເອົາດອກເບັ້ຍດັ່ງກ່າວ ມາລົບໃຫ້ຕົ້ນທຶນທີ່ກູ້ຢືມ ໝາຍຄວາມວ່າເອົາຈຳນວນເງິນຕົວຈິງທີ່ຜູ້ກູ້ຢືມໄດ້ຮັບໃນມືກູ້ຢືມນັ້ນມາເປັນຕົ້ນທຶນ;
5. ການຕົກລົງມອບຊັບ ໂດຍເຮັດໃບມອບກຳມະສິດ, ສັນຍາຊື້-ຂາຍ, ສັນຍາຂາຍຝາກ ແລະ ຮູບການອື່ນ ທີ່ມີຂໍ້ມູນຫລັກຖານຢັ້ງຢືນວ່າ ເຮັດຂຶ້ນດ້ວຍການເຊື່ອງອຳ, ເນື້ອໃນບໍ່ໄດ້ກຳນົດຈຸດປະສົງ, ລາຄາ ແລະ ກຳນົດເວລາປະຕິບັດຢ່າງຈະແຈ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລະ 16 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ຝ່າຍທີ່ມອບຊັບກໍອ້າງວ່າເຮັດຂຶ້ນເພື່ອຄ້ຳປະກັນການກູ້ຢືມເງິນນັ້ນ ຖືວ່າການມອບຊັບດັ່ງກ່າວເປັນໂມຄະ.

ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາ ປະທານສານປະຊາຊົນທ້ອງຖິ່ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ໃຫ້ພວກທ່ານຈົ່ງນຳໄປເຜີຍແຜ່ໃຫ້ບັນດາຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ວິຊາການ ແລະ ຈ່າສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກພົບບັນຫາໃດທີ່ຫຍຸ້ງຍາກ ກໍໃຫ້ລາຍງານຄືນສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສານປະຊາຊົນສູງສຸດ**

ຄຳພັນ ສິດທິດຳພາ

ບ່ອນສົ່ງ:
- ຄະນະປະຈຳສະພາແຫ່ງຊາດ 1 ສະບັບ (ເພື່ອລາຍງານ)
- ຫົວໜ້າອົງການໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ);
- ກະຊວງຍຸຕິທຳ 1 ສະບັບ(ເພື່ອຊາບ);
- ບັນດາສານປະຊາຊົນທ້ອງຖິ່ນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ປະຕິບັດ);
- ຄະນະສານ, ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ສຳເນົາໄວ້ 2 ສະບັບ.